# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 20 ມີຖຸນາ 2010 (20-6-2010)

## ເວລາຄວາມຂົ່ມຂູ່ມາຈາກຂ້າງນອກ

**ຂໍ້ພຣະຄັມພີໃນບົດຮຽນ:** 1 ຊາມູເອນ 7:2-17

### ຜົນສະທ້ອນຕໍ່ຊີວິດ

ບົດຮຽນນີ້ນຳເອົາຫລັກການທີ່ຈະຊ່ວຍທ່ານເຂົ້າເຖິງຄວາມສັມພັນທີ່ເໝາະສົມກັບພຣະເຈົ້າໃນຖ້າມກາງຄວາມຂົ່ມຂູ່ຈາກຂ້າງນອກ.

### ເປົ້າໝາຍຂອງບົດຮຽນ

ບົດຮຽນນີ້ ແມ່ນກ່ຽວກັບຊັຍຊະນະຂອງພວກອິສຣາເອນ ທີ່ເມືອງ ມິຊະປາ ທີ່ເຕັມໄປດ້ວຍຄວາມຫວາດກົວ. ພວກອິສຣາເອນປະສົບກັບຄວາມຂົ່ມຂູ່ຈາກພວກຟີລິສຕິນ, ແຕ່ພວກເຂົາເລືອກເອົາຊອກຫາພຣະເຈົ້າ. ຜົນສຸດທ້າຍພວກເຂົາກໍໄດ້ປະສົບກັບຊັຍຊະນະ.

### ຄວາມສຳຄັນຂອງບົດຮຽນ

ຄຣິສຕຽນເຄີຍປະສົບກັບການຂົ່ມຂູ່ຈາກຂ້າງນອກທີ່ພາໃຫ້ເກີດຄວາມຢ້ານຢູ່ເລື້ອຍ. ໃນນາມທີ່ເປັນຜູ້ທີ່ເຊື່ອ, ພວກເຮົາຈຳເປັນຕ້ອງຮູ້ຈັກວິທີຕອບໂຕ້ກັບຄວາມຂົ່ມຂູ່ເຫຼົ່ານີ້ ດັ່ງນັ້ນພວກເຮົາຈຶ່ງຈະພົບກັບຊັຍຊະນະ.

### ການສຶກສາພຣະຄັມພີ

ຍານາງ ແບັກກີ ໄດ້ສູນເສັຍສາມີທີ່ມີອາຍຸໄດ້ 35 ປີດ້ວຍພຍາດມະເຮັງ ພາໃຫ້ລາວເກີດມີຄວາມຢ້ານຢູ່ໃນໃຈ. ທ່ານ ຈອດສ ຕົກງານຈາກໂຮງງານຜລິດຣົດ ແລະຮູ້ສຶກວ່າຢ້ານສູນເສັຽທຸກຢ່າງ. ມີຫຼາຍຄົນໄດ້ປະສົບກັບຜູ້ຮຸກຮານທີ່ບໍ່ເປັນໜ້າຕ້ອນຮັບເຫຼົ່ານີ້ເຂົ້າມາໃນຊີວິດ ແລະຕ້ອງໄດ້ໃຊ້ຄວາມເຊື່ອຕອບຮັບແທນຄວາມຢ້ານ.

ພວກອິສຣາເອນ ປະເຊີນໜ້າກັບສັດຕຣູອັນໜ້າຢ້ານທີ່ເມື່ອງ ມິຊະປາ. ພວກເຂົາໄດ້ໂຮມກັນຊອກຫານ້ຳພຣະທັຍຂອງພຣະເຈົ້າ, ແຕ່ພວກຟີລິສຕິນເຂົ້າໃຈຜິດວ່າການກະທຳຂອງເຂົາເປັນການຕຽມສູ້ຮົບສົງຄາມ. ໃນຂນະເວລາທີ່ພວກເຂົາມຸ້ງໜ້າເດີນເຂົ້າໄປຫາເມືອງ ມິຊະປາ ປະຊາຊົນຕ້ອງເລືອກເອົາວ່າຈະຢູ່ກັບຄວາມຢ້ານ ຫຼືຄວາມເຊື່ອ. ໃນນາມຜູ້ທີ່ມີຄວາມເຊື່ອ, ພວກເຮົາຕ້ອງຮຽນຮູ້ຈັກວິທີ ຕອບຮັບຕໍ່ສິ່ງທີ່ຂົ່ມຂູ່ມາຈາກຂ້າງນອກ ເພື່ອເຮົາຈະປະສົບກັບຊັຍຊະນະທີ່ພຣະເຈົ້າຕ້ອງການໃຫ້ພວກເຮົາໄດ້ຮັບ.

### 1. <u>ຈົ່ງຖວາຍຕົວຕໍ່ພຣະເຈົ້າ</u>: 1 ຊາມູເອນ 7:2-6

ເປັນລະຍະເວລາ 20ປີ ລະຫວ່າງສອງຂໍ້ທຳອິດໃນພຣະທັມ 1 ຊາມູເອນ ບົດ 7. ແທນທີ່ຈະນະມັສການພຣະເຈົ້າ, ພວກອິສຣາເອນໄປສົນໃຈພຣະຂອງຄົນຕ່າງຊາດແລະຮູບພຣະອັຊໂທເຣັດນັ້ນເສັຽ. ແລ້ວພວກອິສຣາເອນໄດ້

ເລີ້ມຫັນໜ້າເຂົ້າຫາພຣະເຈົ້າ ແລະທ່ານ ຊາມູເອນໄດ້ທຳໜ້າທີ່ເປັນຜູ້ນຳເອົາປະຊາຊົນເຂົ້າມາຄືນດີກັບພຣະເຈົ້າໃໝ່. ເບື້ອງຫລັງໃນເຫດຜົນຂອງຂບວນການຟື້ນຟູກັບຄືນຫາພຣະເຈົ້ານີ້ແມ່ນຄວາມຢ້ານກົວຄວາມຂົ່ມຂູ່ຈາກພາຍນອກຄື ພວກຟີລິສຕິນ. ທ່ານ ຊາມູເອນ ຕ້ອງການຄວາມແນ່ນອນໃຈຈາກຊາວອິສຣາເອນວ່າພວກເຂົາຈິງໃຈວ່າຈະກັບມາຫາແທ້ ບໍ່ແມ່ນກັບມາດ້ວຍຄວາມຢ້ານກົວພວກ ຟີລິສຕິນເທົ່ານັ້ນ. ທ່ານ ໄດ້ບອກເຂົາວ່າ "ຖ້າພວກເຈົ້າຈະກັບຄືນມາຫາພຣະຜູ້ເປັນເຈົ້າດ້ວຍຄວາມເຕັມໃຈ". ບາງຄັ້ງຄົນຕ້ອງການຄວາມຊ່ວຍເຫຼືອ ບໍ່ແມ່ນຟື້ນຟູຈິດໃຈ; ແຕ່ທ່ານ ຊາມູເອນຢາກໃຫ້ປະຊາຊົນຕ້ອງການທັງສອງແນວ.

ທ່ານ ຊາມູເອນ ໄດ້ບອກປະຊາຊົນວ່າ ທຳອິດພວກເຂົາຕ້ອງປະຖິ້ມການນັບຖືຮູບປັ້ນເສັຽກ່ອນ. ພຣະເຈົ້າເທົ່ານັ້ນທີ່ມີຄຸນຄ່າໃນການສັຣເສີນ ແລະພວກເຂົາບໍ່ສົມຄວນຈະແບ່ງຄວາມນັບຖືຂາບໄຫວ້ຂອງພວກເຂົາກັບຜູ້ອື່ນ. ພວກເຂົາຈຳເປັນຕ້ອງຖວາຍຕົວຕໍ່ພຣະເຈົ້າ, ຕ້ອງຂັບໄລ່ບາງສິ່ງອອກຈາກຈິດໃຈຂອງເຂົາ ແລະຕ້ອງປ່ອຍໃຫ້ພຣະເຈົ້າເຂົ້າມາຢູ່ໃນຈິດໃຈຂອງພວກເຂົາ.

ພວກປະຊາຊົນໄດ້ມາໂຮມກັນຢູ່ໃນເມືອງ ມີຊະປາ ເພື່ອໄຫວ້ວອນອະທິຖານ ແລະພວກເຂົາໄດ້ຖອກນ້ຳໃສ່ເທິງດິນເພື່ອເປັນເຄື່ອງໝາຍສະແດງວ່າພຣະເຈົ້າໄດ້ຊົງຊຳຣະລ້າງຄວາມບາບຂອງພວກເຂົາຖິ້ມໄປແລ້ວ. ພວກເຂົາໄດ້ຖືສິນອົດອາຫານ ແລະສາຣະພາບຄວາມຜິດບາບຕໍ່ໜ້າພຣະເຈົ້າ, ຮ້ອງຂໍການອະພັຍໂທດຈາກພຣະເຈົ້າສຳລັບການຫລົງຜິດໃນເວລາທີ່ຜ່ານມາ.

ເວລາໃດກໍຕາມໃນຊີວິດຂອງເຮົາ ຈະບໍ່ມີຄຳວ່າສວາຍເກີນໄປໃນການທີ່ຈະກັບຄືນມາຫາພຣະເຈົ້າ. ບາງທີເຮົາອາດຈະຖືກກົດດັນຈາກສະພາບການທາງພາຍນອກ ແລະຮູ້ສຶກວ່າເຮົາຕ້ອງການເຂົ້າພົບກັບພຣະເຈົ້າ. ຈົ່ງລະຖິ້ມຄວາມເຫັນແກ່ຕົວ, ຄວາມອວດຕົວ, ຄວາມບາບ, ແລະຄວາມຮູບໂຄຣົບຕ່າງໆ. ຫຍັບເຂົ້າໃກ້ພຣະເຈົ້າດ້ວຍການໄຫວ້ວອນອະທິຖານ, ອ່ານພຣະຄຳຂອງພຣະອົງ, ແລະຫັນຫລັງໃຫ້ຄວາມຜິດບາບ. ຈົ່ງຖວາຍຕົວທ່ານເອງຕໍ່ພຣະພັກພຣະເຈົ້າ.

## 2. <u>ຈົ່ງເອົາຊະນະຄວາມຢ້ານກົວ</u>: 1 ຊາມູເອນ 7:7-11

ການຟື້ນຟູຈິດວິນຍານຂອງຊາວອິສຣາເອນໄດ້ຮັບຂໍ້ທົດສອບຢ່າງວ່ອງໄວ; ໃນເວລາທີ່ພວກຟີລິສຕິນໄດ້ຍິນຂ່າວວ່າ ຊາວອິສຣາເອນເຕົ້າໂຮມກັນຢູ່ໃນເມືອງ ມີຊະປາ ພວກເຂົາເຂົ້າໃຈວ່າພວກອິສຣາເອນຕຽມການຕໍ່ສູ້ສົງຄາມຫລາຍກວ່າຊອກຫາການຟື້ນຟູຈິດວິນຍານ. ຜູ້ນຳຂອງພວກຟີລິສຕິນໄດ້ເດີນຂບວນທະຫານເຂົ້າໄປເມືອງມີຊະປາເປັນເຫດໃຫ້ຊາວອິສຣາເອນມີຄວາມຢ້ານກົວຫຼາຍຂຶ້ນ. ພວກຊາວອິສຣາເອນໄດ້ຊອກຫາພຣະເຈົ້າເພື່ອໃຫ້ພວກເຂົາພົ້ນພັຍຈາກຊາວຟີລິສຕິນ, ແຕ່ບັດນີ້ພວກເຂົາໄດ້ປະເຊີນໜ້າກັບການສູ້ຮົບ. ການສະຖິດຢູ່ນຳຂອງພຣະເຈົ້າຊ່ວຍໃຫ້ພວກເຮົາມີຄວາມໝັ້ນໃຈໃນການປະເຊີນໜ້າກັບຄວາມຢ້ານກົວ ແລະສະແດງຕົນອອກດ້ວຍຄວາມເຊື່ອຟັງ.

ປະຊາຊົນອິສຣາເອນໄດ້ຫັນໜ້າເຂົ້າຫາທ່ານ ຊາມູເອນ ແລະຂໍຮ້ອງໃຫ້ທ່ານ**ຢ່າຢຸດຢັ້ງໃນການຮ້ອງໃຫ້ຂໍກັບພຣະເຈົ້າເພື່ອພວກເຮົາ**. ການສູ້ຮົບເປັນຂອງພຣະເຈົ້າ ແລະມີແຕ່ພຣະອົງເທົ່ານັ້ນທີ່ມີພລັງອຳນາດທີ່ຈະເອົາຊັຍຊະນະໃຫ້ພວກເຂົາໄດ້. ທ່ານ ຊາມູເອນ ໄດ້ໄຫວ້ວອນອະທິຖານ, ແຕ່ທ່ານຍັງໄດ້ຖວາຍເຄື່ອງບູຊາອີກດ້ວຍ ໂດຍການນຳເອົາແກະຕົວຜູ້ໜຸ່ມ ແລະເຜົາຖວາຍບູຊາແດ່ພຣະເຈົ້າ. ປະຊາຊົນໄດ້ຊອກຫາການອະພັຍໂທດແລະໄດ້ຖອກນ້ຳໃຫ້ເປັນການຖວາຍນ້ຳ, ແຕ່ວ່າພວກເຂົາຈຳເປັນຕ້ອງເຮັດຄື ຖວາຍບູຊາເລືອດສຳລັບການອະພັຍໂທດ (ຮຮ 9:22).

ໃນຂະນະທີ່ພວກຟີລິສຕິນຫຍັບເຂົ້າມາໃກ້ ແລະທ່ານ ຊາມູເອນທຳການຖວາຍບູຊາ, ພຣະເຈົ້າໄດ້ຊົງເຮັດສຽງຟ້າຮ້ອງສນັ່ນຫວັ່ນໄຫວສູ້ກັບພວກຟີລິສຕິນ. ພວກເຂົາຮູ້ຈັກວ່າພຣະເຈົ້າໄດ້ສູ້ຮົບເພື່ອຊາວອິສຣາເອນ ແລະພວກເຂົາຕົກຢູ່ໃນຄວາມສັບສົນອົນລະວົນວຸ້ນວາຍ ແລະແລ່ນພ່າຍໜີໄປ. ພຣະເຈົ້າໄດ້ທຳການອັນແປກປລາດ ມະຫັສຈັນເພື່ອນຳເອົາຊັຍຊະນະມາໃຫ້ຊາວອິສຣາເອນ, ພຣະອົງຍັງສາມາດເຮັດວິທີອັສຈັນຕ່າງໆເພື່ອນຳເອົາຊັຍຊະນະມາສູ່ຊີວິດຂອງທ່ານຈາກຄວາມຢ້ານກົວເໝືອນກັນ.

ພຣະເຈົ້າບໍ່ໄດ້ຊົງເຮັດທຸກສິ່ງຢ່າງໃຫ້ຊາວອິສຣາເອນ, ພວກເຂົາຍັງໄດ້ໄລ່ນຳຂ້າພວກຟີລິສຕິນດ້ວຍຕົວເຂົາເອງ ແລະພວກເຂົາກໍໄດ້ນຳທຳລາຍພວກຟີລິສຕິນຕລອດຈົນເຖິງພາກໃຕ້ຂອງບ້ານ ເບດຄາ. ເໝືອນກັບວ່າຊາວອິສຣາເອນໄດ້ໄລ່ຕິດຕາມພວກຟີລສຕິນຫຼາຍກວ່າຫ້າໄມ. ຊາວອິສຣາເອນໄດ້ຮັບຊັຍຊະນະຢ່າງງົດງາມ ແລະພວກຟີລິສຕິນກໍມີຄວາມເກງກົວນັບຖືຊາວອິສຣາເອນ (1 ຊມອ 7:13).

ໃນເມື່ອຊີວິດຂອງເຮົາມີຄວາມກົດດັນຫຼາຍຂຶ້ນ ພວກເຮົາບໍ່ຄວນຖືວ່າເປັນການລົງໂທດ ແຕ່ໃຫ້ເປັນສິ່ງທີ່ນຳພາໃຫ້ເຮົາເຂົ້າໃກ້ພຣະເຈົ້າກວ່າເກົ່າ. ໃນຂນະທີ່ຊາວອິສຣາເອນເຂົ້າໃກ້ພຣະເຈົ້າໃນຍາມຄັບຂັນ, ພຣະອົງກໍຍັງຊ່ວຍພວກເຂົາເຖິງແມ່ນພວກເຂົາມີຄວາມຢ້ານກົວ. ພຣະເຈົ້າສາມາດຊ່ວຍທ່ານໃຫ້ພົ້ນຈາກສິ່ງທີ່ຂົ່ມຂູ່ທ່ານເວລາທີ່ທ່ານອ້ອນວອນຂໍຄວາມຊ່ວຍເຫຼືອຈາກພຣະອົງ.

## 3. <u>ຈົ່ງຈົດຈຳລະນຶກເຖິງຄວາມຊ່ວຍເຫຼືອຂອງພຣະເຈົ້າ:</u> 1 ຊາມູເອນ 7:12-17

ຜົນຂອງຊັຍຊະນະທີ່ໄດ້ຮັບຢູ່ເມືອງ ມິຊະປາ ນຳກຳລັງໃຈອັນສູງສິ່ງມາສູ່ຊາດອິສຣາເອນ ຈົນທ່ານຊາມູເອນໄດ້ສ້າງອານຸສາວະຣີຫີນຂຶ້ນຢູ່ລະຫວ່າງເມືອງ ມິຊະປາ ແລະ ເມືອງເຊນ "ມີຄວາມໝາຍວ່າພຣະເຈົ້າຊົງຊ່ວຍເຫຼືອ" ເພື່ອຈົດຈຳລະນຶກເຖິງຄວາມຊ່ວຍເຫຼືອຂອງພຣະເຈົ້າໃນສນາມຮົບ. ທ່ານໄດ້ເຮັດໃຫ້ປະຊາຊົນຖວາຍກຽດແດ່ພຣະເຈົ້າຢ່າງແທ້ຈິງສຳລັບສິ່ງທີ່ພຣະອົງໄດ້ທຳ, ພວກເຂົາໄດ້ຫັນຫຼັງໃຫ້ຮູບພຣະຕ່າງໆ, ຫັນໜ້າເຂົ້າຫາພຣະເຈົ້າແລະຮ້ອງຂໍໃຫ້ພຣະເຈົ້າຊ່ວຍໃຫ້ໄດ້ຊັຍຊະນະ. ພຣະເຈົ້າໄດ້ເຂົ້າມາຂັດຂວາງດ້ວຍການເຮັດໃຫ້ພວກຟີລິສຕິນເກີດຄວາມສັບສົນວຸ້ນວາຍແລະເສັຽຊັຍໄປ.

ພວກຟີລິສຕິນກໍບໍ່ໄດ້ຣຸກຮານດິນແດນຂອງອິສຣາເອນອີກເລີຍໃນສມັຍຂອງຊາມູເອນ. ມີແຕ່ສມັຍຂອງກະສັດຊາອູນເປັນກະສັດພວກຟີລິສຕິນກັບຕົວຂຶ້ນມາເປັນຕົວປໍຣະປັກກັບອິສຣາເອນອີກ. ນອກຈາກນັ້ນ, ເຂດແດນຕັ້ງແຕ່ເມືອງເອກໂຣນ ຈົນຮອດເມືອງກາດທີ່ພວກຟີລິສຕິນຍຶດເອົາໄປນັ້ນມາເປັນຂອງອິສຣາເອນອີກ. ພວກເຂົາຍັງໄດ້ໄປຊ່ວຍເພື່ອນບ້ານບາງປະເທດ ຊຶ່ງພາໃຫ້ເກີດມີສັນຕິພາບກັບຊາວ ເອໂມຣິດ ທີ່ເປັນໄປໄດ້ຍາກໃນສມັຍຂອງພຣະຄັມພີເດີມ.

ດ້ວຍການຕັ້ງເສົາຫີນອານຸສາວະຣີພຣະເຈົ້າຊ່ວຍເຫຼືອໃຫ້ເປັນທີ່ລະນຶກເຖິງຊັຍຊະນະ, ທ່ານຊາມູເອນ ໄດ້ຫວັງວ່າເສົາຫີນຈະເຕືອນໃຫ້ປະຊາຊົນຈົດຈຳວ່າພຣະເຈົ້າເຄີຍໄດ້ຊ່ວຍເຫຼືອພວກເຂົາ. ເສົາຫີນນີ້ເປັນເຄື່ອງເຕືອນທີ່ຕາເຫັນວ່າພຣະເຈົ້າໄດ້ທຳງານດຳເນີນຢູ່ໃນຊີວິດຂອງພວກເຂົາ. ພວກເຮົາທຸກຄົນຕ້ອງການເຄື່ອງເຕືອນຄວາມຈຳທີ່ຕາເຫັນເຖິງວິທີທາງທີ່ພຣະເຈົ້າຊົງໄດ້ຊ່ວຍທຳງານໃນຊີວິດຂອງເຮົາ ເພື່ອເປັນຫຼັກໄວ້ໃຫ້ພວກເຮົາກັບຄືນເພິ່ງພາໃນເວລາມີຄວາມຂັດສົນ. ຕລອດເວລາຂອງການປົກຄອງຂອງທ່ານ ຊາມູເອນ, ຊັຍຊະນະ ແລະເສົາຫີນເຕືອນຄວາມຈຳໄດ້ເຕືອນພວກເຂົາວ່າບໍ່ມີສັດຕຣູຄົນໃດສາມາດຣຸກຮານພວກເຂົາຕາບໃດທີ່ພວກເຂົາຫັນຫລັງໃສ່ການໄຫວ້ຮູບປັ້ນແລະຫັນໜ້າເຂົ້າຫາແຕ່ພຣະເຈົ້າເທົ່ານັ້ນ.

ເພື່ອເພີ້ມເຕີມການຈົດຈຳຊັຍຊະນະອີກຂັ້ນນຶ່ງ, ທ່ານ ຊາມູເອນ ໄດ້ຕັ້ງເມືອງຣາມາ ຊຶ່ງເປັນບ້ານເກີດຂອງທ່ານ ໃຫ້ເປັນສູນກາງຂອງການປົກຄອງ ແລະການທາງສາສນາ. ທ່ານໄດ້ເດີນທາງອ້ອມຮອບໄປມາຣະຫວ່າງເມືອງເບັດເອນ, ເມືອງກິນການ, ແລະເມືອງມີຊະປາ ເພື່ອປົກຄອງ ແລະຮັກສາຄວາມເປັນອັນນຶ່ງອັນດຽວຂອງປະຊາຊົນ. ເຖິງຢ່າງໃດກໍຕາມຈຸດເດັ່ນໃນວຽກຂອງທ່ານແມ່ນແທ່ນບູຊາຂອງພຣະເຈົ້າ. ທ່ານເອງຮູ້ວ່າກຳລັງຂອງທ່ານແມ່ນໄດ້ມາຈາກພຣະເຈົ້າ, ແລະເຫດການທີ່ໄດ້ເກີດຂຶ້ນທີ່ເມືອງ ມີຊະປາ ໄດ້ຍ້ຳບອກຄວາມຈິງວ່າທ່ານຈຳເປັນຕ້ອງອາສັຍພຣະເຈົ້າໃນການນຳພາໄພ່ພົນຂອງພຣະອົງ. ພວກເຮົາຄວນຕັ້ງການນະມັສການພຣະເຈົ້າເປັນວຽກສຳຄັນ ໃນຊີວິດຂອງເຮົາ.

## ບົດຮຽນຊີວິດ:

ພວກເຮົາທຸກຄົນໄດ້ພົບແລະຍັງຈະພົບກັບການຂົ່ມຂູ່ຈາກຂ້າງນອກທີ່ຕ້ານກັບຄວາມເຊື່ອຂອງພວກເຮົາອີກ. ເຫດການທີ່ເໜືອຄວາມສາມາດຂອງເຮົາຈະນຳເອົາຄວາມຢ້ານກົວ ແລະບັນຫາອັນຫຍຸ້ງຍາກ ທີ່ທົດສອບການຖວາຍຕົວຂອງເຮົາໃຫ້ກັບພຣະເຈົ້າ. ໃນເວລານັ້ນແຫຼະ, ພວກເຮົາມີໂອກາດທີ່ຈະເລືອກເອົາ: ພວກເຮົາຈະຫົດຫູ່ຢູ່ກັບຄວາມຢ້ານ, ພວກເຮົາຈະອາສັຍຄວາມສາມາດຂອງເຮົາເອງ, ພວກເຮົາຈະວາງໃຈໃນບາງຄົນ ຫຼືບາງສິ່ງ, ຫຼືພວກເຮົາຈະເລືອກໄປເພິ່ງພຣະເຈົ້າ ຫຼືພຍາຍາມຈະຢືນຢູ່ໃນລຳແຂ່ງຂອງຄວາມອ່ອນແອຂອງຕົນເອງ.

ເວລາທ່ານປະເຊີນໜ້າກັບສະພາບການຫຍຸ້ງຍາກຈາກພາຍນອກ, ທ່ານຄວນຕ້ອງ:

- ຈຳໄວ້ວ່ານີ້ເປັນໂອກາດດີທີ່ຈະຕ້ອງຖວາຍຕົນເອງຕໍ່ພຣະເຈົ້າ ແລະແຜນການຂອງພຣະອົງສຳລັບຊີວິດຂອງທ່ານອີກຄັ້ງໃໝ່.
- ຊອກຫາຄວາມສະຖິດຢູ່ນຳຂອງພຣະເຈົ້າ ແລະພະລັງອຳນາດຂອງພຣະອົງໃນຊີວິດຂອງທ່ານ ເພື່ອວ່າທ່ານຈະເອົາຊະນະຄວາມຢ້ານກົວທີ່ທ່ານກຳລັງປະເຊີນຢູ່.
- ວາງໃຈວ່າພຣະເຈົ້າກຳລັງທຳງານຢູ່ໃນເຫດການໃນວິທີທາງທີ່ເກີນກວ່າຄວາມຄິດຂອງທ່ານທີ່ຈະຄິດອອກ (ອຟຊ 3:20).
- ສເລີມສລອງຊັຍຊະນະທີ່ພຣະເຈົ້າຊົງປະທານໃຫ້ແກ່ທ່ານ ແລະປະຕິບັດຕາມຄຳສັ່ງຂອງພຣະອົງເພື່ອຈະໄດ້ຮັບຊັຍຊະນະໃນຄັ້ງຕໍ່ໄປ.
- ຈັດຕັ້ງເຄື່ອງໝາຍຂອງຝ່າຍຈິດວິນຍານທີ່ຈະເຕືອນເຖິງຈຸດທີ່ຊີວິດຂອງທ່ານຂຶ້ນສູງ ເພື່ອວ່າຄັ້ງໜ້າທີ່ມີການຂົ່ມຂູ່ຈາກຂ້າງນອກ ທ່ານຈະສາມາດຫລຽວຄືນເບິ່ງຄວາມຊື່ສັດຂອງພຣະເຈົ້າ.

ຍານາງ ເບັກກີ ຜູ້ທີ່ໄດ້ເວົ້າເຖິງໃນການເລີ້ມຕົ້ນຂອງບົດຮຽນນີ້ ເຄີຍໃຊ້ການສູນເສັຍຜົວຂອງລາວເປັນໂອກາດດຶງຕົວລາວເຂົ້າໃກ້ຊິດກັບພຣະເຈົ້າ. ນາງໄດ້ເລີ້ມເອົາສິ່ງຕ່າງໆໃນຊີວິດຂອງລາວທີ່ເຄີຍຝາກໄວ້ກັບຜົວປ່ຽນມາວາງໄວ້ໃນຄວາມເຊື່ອທີ່ມີກັບພຣະເຈົ້າ. ທ່ານ ຈອສ ຮູ້ສຶກວ່າຕົນເອງໄດ້ວາງໃຈເຊື່ອໃນບໍຣິສັດຂອງຕົນເອງ ແທນທີ່ຈະວາງ ໃຈເຊື່ອໃນພຣະເຈົ້າທີ່ເປັນຜູ້ປະທານທຸກສິ່ງໃຫ້ແກ່ລາວ. ເວລາການຂົ່ມຂູ່ຈາກຂ້າງນອກເຂົ້າມາ, ພວກເຮົາຕ້ອງການການຊົງສະຖິດຢູ່ນຳຂອງພຣະເຈົ້າພາຍໃນເຮົາເພື່ອຈະຕອບຮັບຕ້ອນມັນດ້ວຍຄວາມເຊື່ອ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ໂດຍ BS